ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ: 412/ລບ

ນະຄອນຫຼວງວຽງຈັນ, ວັນທີ 10.11.2016

# ດຳລັດ
# ວ່າດ້ວຍສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມກົດໝາຍວ່າດ້ວຍການໂທລະຄົມມະນາຄົມ ສະບັບເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ສະບັບເລກທີ 61/ສພຊ, ລົງວັນທີ 15 ກໍລະກົດ 2015;
- ອີງຕາມໜັງສືສະເໜີຂອງ ລັດຖະມົນຕີ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 2737/ປທສ, ລົງວັນທີ 14 ກັນຍາ 2016.

**ລັດຖະບານ ອອກດຳລັດ:**

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການສ້າງ, ນຳໃຊ້, ບຳລຸງຮັກສາ, ພັດທະນາ ແລະ ຄຸ້ມຄອງ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ເພື່ອພັດທະນາວຽກງານດັ່ງກ່າວ ຢ່າງເປັນລະບົບ, ມີປະສິດທິພາບ, ປະສິດທິຜົນ, ປະຢັດ, ທັນສະໄໝ ແລະ ເຊື່ອມຕໍ່ກັນໄດ້ ແນໃສ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

**ມາດຕາ 2 ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ແມ່ນລະບົບລວມສູນໂຄງລ່າງພື້ນຖານເຕັກນິກ ເພື່ອໃຫ້ບໍລິການທາງດ້ານຂໍ້ມູນຂ່າວສານ ເປັນຕົ້ນ ບໍລິການວາງເຊີເວີ, ຖານຂໍ້ມູນ, ໂປຣແກຣມ, ເວັບໄຊ ແລະ ສະໜອງ ຂໍ້ມູນຂ່າວສານຕ່າງໆຜ່ານອິນເຕີເນັດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສູນຂໍ້ມູນຜ່ານອິນເຕີເນັດ (Internet Data Center)** ໝາຍເຖິງ ລະບົບໂຄງລ່າງພື້ນຖານເຕັກນິກທີ່ປະກອບມີລະບົບອຸປະກອນທີ່ຈຳເປັນ ເພື່ອໃຫ້ບໍລິການພື້ນທີ່ຕິດຕັ້ງອຸປະກອນ, ບ່ອນວາງເຊີເວີ, ໃຊ້ເຊີເວີ, ພື້ນທີ່ເຊີເວີ, ໃຊ້ຊອບແວ, ໃຊ້ຖານຂໍ້ມູນ, ເກັບຮັກສາຂໍ້ມູນ ແລະ ອື່ນໆ;

2. **ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ (Internet Content Center)** ໝາຍເຖິງ ສູນໃຫ້ບໍລິການຂໍ້ມູນຂ່າວສານຕ່າງໆໃນຮູບແບບເອເລັກໂຕຣນິກ ເປັນຕົ້ນ ສື່ສັງຄົມອອນລາຍ, ວິດີໂອ, ຮູບພາບ, ສຽງ, ເພງ, ໜັງສືຜ່ານອິນເຕີເນັດ;

3. **ຖານຂໍ້ມູນ (Data Base)** ໝາຍເຖິງ ບ່ອນເກັບຮັກສາຂໍ້ມູນໃນຮູບແບບເອເລັກໂຕຣນິກໄວ້ຢ່າງເປັນລະບົບທີ່ສາມາດຄຸ້ມຄອງ, ປັບປຸງ ແລະ ນຳໃຊ້ໄດ້;

4. **ລະຫັດຊື່ອິນເຕີເນັດແຫ່ງຊາດ (Country Code Top Level Domain-name)** ໝາຍເຖິງ ລະຫັດຊື່ອິນເຕີເນັດສູງສຸດ ຂອງແຕ່ລະປະເທດ. ສຳລັບລະຫັດຊື່ອິນເຕີເນັດແຫ່ງຊາດຂອງ ສປປ ລາວ ແມ່ນດອດລາ ".la ";

5. **ສູນກາງເຊື່ອມຕໍ່ອິນເຕີເນັດ (National Internet Exchange, International Internet Gateway)** ໝາຍເຖິງ ຈຸດເຊື່ອມຕໍ່ ລະຫວ່າງ ຜູ້ໃຫ້ບໍລິການອິນເຕີເນັດພາຍໃນປະເທດນຳກັນ ແລະ ລະຫວ່າງເຄືອຂ່າຍອິນເຕີເນັດພາຍໃນ ແລະ ສາກົນ;

6. **ຄວາມປອດໄພຂໍ້ມູນຂ່າວສານ (Information Security)** ໝາຍເຖິງ ຄວາມປອດໄພທາງດ້ານເຕັກນິກ ແລະ ການຈັດການລະບົບຂໍ້ມູນຂ່າວສານ ເພື່ອຮັກສາ, ປ້ອງກັນ ແລະ ກູ້ຄືນລະບົບຂໍ້ມູນຂ່າວສານ ແລະ ການບໍລິການຈາກເຫດບັງເອີນ, ການໂຈມຕີ ຫຼື ໄພອັນຕະລາຍອື່ນ;

7. **ຂໍ້ມູນສ່ວນບຸກຄົນ (Personal Data)** ໝາຍເຖິງ ຂໍ້ມູນທີ່ກ່ຽວຂ້ອງ ຫຼື ບົ່ງບອກລັກສະນະ, ຕົວຕົນ, ການເຄື່ອນໄຫວຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໂດຍທາງກົງ ຫຼື ທາງອ້ອມ;

8. **ໂຄງລ່າງພື້ນຖານທາງດ້ານເຕັກນິກ** ໝາຍເຖິງ ສິ່ງອຳນວຍຄວາມສະດວກທາງດ້ານເຕັກນິກ ເປັນຕົ້ນ ຮາດແວ, ຊອບແວ, ຖານຂໍ້ມູນ, ລະບົບເຄືອຂ່າຍ, ລະບົບສຳຮອງຂໍ້ມູນ, ລະບົບກູ້ຂໍ້ມູນຄືນ;

9. **ອາຄານ** ໝາຍເຖິງ ບ່ອນເກັບຮັກສາໂຄງລ່າງພື້ນຖານທາງດ້ານເຕັກນິກ ເຊັ່ນ ຕຶກ, ຫ້ອງ, ຕູ້ສຳເລັດຮູບ ແລະ ອື່ນໆ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ລັດ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສ້າງ, ພັດທະນາ ແລະ ນຳໃຊ້ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ແລະ ບໍລິການສັງຄົມ ໂດຍຮັບປະກັນໃຫ້ມີການຄຸ້ມຄອງແບບລວມສູນ, ເປັນເອກະພາບ, ມີຄຸນນະພາບ, ປະສິດທິຜົນ, ປະຢັດ, ປອດໄພ ແລະ ລາຄາຍຸຕິທຳ.

ລັດ ຊຸກຍູ້, ສົ່ງເສີມ ໃຫ້ທຸກພາກສ່ວນ ຫັນຂໍ້ມູນຂ່າວສານຕ່າງໆຂອງຕົນ ໃຫ້ເປັນແບບເອເລັກໂຕຣນິກ ເພື່ອສະດວກໃນການເກັບຮັກສາ, ເຜີຍແຜ່ ແລະ ໃຫ້ບໍລິການ.

**ມາດຕາ 5 ຫຼັກການ ກ່ຽວກັບ ວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
3. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
4. ເຊື່ອມຕໍ່ຫາກັນ ໂດຍຜ່ານ ສູນກາງເຊື່ອມຕໍ່ອິນເຕີເນັດ;
5. ສອດຄ່ອງກັບ ສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ສ້າງ, ພັດທະນາ, ໃຫ້ບໍລິການ ແລະ ນຳໃຊ້ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ດ້ວຍການແລກປ່ຽນບົດຮຽນດ້ານເຕັກນິກ, ຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີການພັດທະນາ ແລະ ທັນສະໄໝ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ
### ໝວດທີ 1
### ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກລັດ

**ມາດຕາ 8 ປະເພດສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກລັດ**

ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກລັດ ມີສອງປະເພດ ດັ່ງນີ້:

1. ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດແຫ່ງຊາດ;
2. ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງອົງການຈັດຕັ້ງລັດ.

**ມາດຕາ 9 ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ແຫ່ງຊາດ**

ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ແຫ່ງຊາດ ແມ່ນສູນຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງລັດ ທີ່ຖືກສ້າງຂຶ້ນ ແລະ ພັດທະນາ ເພື່ອໃຫ້ບໍລິການແກ່ທຸກອົງການຈັດຕັ້ງຂອງພັກ, ລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ.

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຮັບຜິດຊອບ ໃນການສ້າງ, ບຳລຸງຮັກສາ ແລະ ພັດທະນາ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດແຫ່ງຊາດ.

**ມາດຕາ 10 ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຂອງອົງການຈັດຕັ້ງລັດ**

ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງອົງການຈັດຕັ້ງລັດ ແມ່ນສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ລວມທັງ ອົງການຈັດຕັ້ງອື່ນຂອງລັດ, ຂອງພັກ ຊຶ່ງຖືກສ້າງຂຶ້ນ ແລະ ພັດທະນາ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານຂອງຕົນ.

ອົງການຈັດຕັ້ງດັ່ງກ່າວ ສາມາດສ້າງສູນຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງຕົນໄດ້ ໂດຍປະສານສົມທົບກັບກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ໃຫ້ປະຕິບັດຕາມດຳລັດສະບັບນີ້.

ທຸກສູນຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງອົງການຈັດຕັ້ງລັດ ຕ້ອງຂຶ້ນທະບຽນນຳ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 11 ການເຊື່ອມຕໍ່ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກລັດ**

ການເຊື່ອມຕໍ່ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກລັດ ຕ້ອງປະຕິບັດ ດັ່ງນີ້:

1. ການເຊື່ອມຕໍ່ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງອົງການຈັດຕັ້ງລັດ ກັບ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດແຫ່ງຊາດ ໃຫ້ຜ່ານ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຫຼື ຜູ້ໃຫ້ບໍລິການອິນເຕີເນັດ ທີ່ລັດຖະບານກຳນົດໄວ້ໃນແຕ່ລະໄລຍະ;

2. ການເຊື່ອມຕໍ່ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງອົງການຈັດຕັ້ງລັດ ດ້ວຍກັນໃຫ້ຜ່ານ ສູນກາງເຊື່ອມຕໍ່ອິນເຕີເນັດ ເວັ້ນເສຍແຕ່ໄດ້ກຳນົດໄວ້ຢ່າງອື່ນ ໃນລະບຽບການສະເພາະ ເປັນຕົ້ນ ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

**ມາດຕາ 12 ການນຳໃຊ້, ບຳລຸງຮັກສາ ແລະ ພັດທະນາສູນຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງອົງການຈັດຕັ້ງລັດ**

ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຂອງອົງການຈັດຕັ້ງລັດ ຖືກນຳໃຊ້ໃນການເກັບຮັກສາຂໍ້ມູນຂ່າວສານຂອງອົງການດັ່ງກ່າວ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ, ເປັນບ່ອນເຜີຍແຜ່ຂໍ້ມູນຂ່າວສານ ແລະ ໃຫ້ບໍລິການແກ່ ອົງການຈັດຕັ້ງລັດດ້ວຍກັນ, ຫົວໜ່ວຍທຸລະກິດ ແລະ ສັງຄົມ.

ການບຳລຸງຮັກສາ ແລະ ການພັດທະນາ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງອົງການຈັດຕັ້ງລັດ ຕ້ອງໄດ້ປະຕິບັດຢ່າງຕໍ່ເນື່ອງ, ປັບປຸງໃຫ້ທັນສະໄໝ ເພື່ອຮັບປະກັນໃຫ້ຢູ່ໃນສະພາວະຄົບຖ້ວນ, ຖືກຕ້ອງ, ພ້ອມໃຊ້ງານ ແລະ ມີປະສິດທິຜົນ.

ໃນກໍລະນີ ອົງການຈັດຕັ້ງລັດ ຫາກບໍ່ສາມາດສືບຕໍ່ບຳລຸງຮັກສາ ແລະ ພັດທະນາສູນຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງຕົນ, ອົງການຈັດຕັ້ງດັ່ງກ່າວ ຕ້ອງລວບລວມ ແລະ ເຄື່ອນຍ້າຍຖານຂໍ້ມູນ ແລະ ຂໍ້ມູນຂ່າວສານ ທັງໝົດນັ້ນ ໄປເກັບຮັກສາໄວ້ໃນ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດແຫ່ງຊາດ.

## ໝວດທີ 2
## ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກເອກະຊົນ

**ມາດຕາ 13 ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກເອກະຊົນ**

ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກເອກະຊົນ ແມ່ນສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຂອງນິຕິບຸກຄົນ ຫຼື ການຈັດຕັ້ງເອກະຊົນ ທີ່ສ້າງຂຶ້ນ ແລະ ພັດທະນາ ເພື່ອຮັບໃຊ້ວຽກງານຂອງຕົນ ຫຼື ໃຫ້ບໍລິການແກ່ຫົວໜ່ວຍທຸລະກິດ ແລະ ສັງຄົມ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 14 ປະເພດສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກເອກະຊົນ**

ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກເອກະຊົນ ມີສອງປະເພດ ຄື:

1. ສູນຂໍ້ມູນຜ່ານອິນເຕີເນັດ;
2. ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ.

## ພາກທີ III
## ຖານຂໍ້ມູນ ແລະ ຂໍ້ມູນຂ່າວສານ
## ໝວດທີ 1
## ຖານຂໍ້ມູນ ແລະ ຂໍ້ມູນຂ່າວສານພາກລັດ

**ມາດຕາ 15 ຖານຂໍ້ມູນຂອງອົງການຈັດຕັ້ງລັດ**

ຖານຂໍ້ມູນຂອງອົງການຈັດຕັ້ງລັດ ແມ່ນບ່ອນເກັບຮັກສາຂໍ້ມູນຂ່າວສານ ໃນຮູບແບບເອເລັກໂຕຣນິກ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ລວມທັງ ອົງການຈັດຕັ້ງອື່ນຂອງລັດ, ຂອງພັກ ເພື່ອໃຫ້ອົງການຈັດຕັ້ງລັດດ້ວຍກັນ, ຫົວໜ່ວຍທຸລະກິດ ແລະ ສັງຄົມ ສາມາດນຳໃຊ້ຂໍ້ມູນຂ່າວສານ ດັ່ງກ່າວ ໂດຍຜ່ານໂປຣແກຣມນຳໃຊ້, ເວັບໄຊ ຫຼື ຮູບແບບອື່ນທາງອິນເຕີເນັດ.

ອົງການຈັດຕັ້ງລັດ ທີ່ມີສູນຂໍ້ມູນຂ່າວສານຜ່ານອິນເຕີເນັດເປັນຂອງຕົນເອງ ຕ້ອງເກັບຮັກສາຖານຂໍ້ມູນ ແລະ ຂໍ້ມູນຂ່າວສານ ໄວ້ໃນສູນຂອງຕົນ ແລະ ຕ້ອງມີລະບົບສຳຮອງຖານຂໍ້ມູນ ແລະ ຂໍ້ມູນຂ່າວສານດັ່ງກ່າວ ໃນສູນຂໍ້ມູນຂ່າວສານຜ່ານອິນເຕີເນັດແຫ່ງຊາດ.

ສຳລັບອົງການຈັດຕັ້ງລັດ ທີ່ບໍ່ມີສູນຂໍ້ມູນຂ່າວສານຜ່ານອິນເຕີເນັດເປັນຂອງຕົນເອງ ຕ້ອງເກັບຮັກສາຖານຂໍ້ມູນ ແລະ ຂໍ້ມູນຂ່າວສານໄວ້ໃນ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດແຫ່ງຊາດ ເທົ່ານັ້ນ.

**ມາດຕາ 16 ການເຜີຍແຜ່ຂໍ້ມູນຂ່າວສານຜ່ານອິນເຕີເນັດ ຂອງອົງການຈັດຕັ້ງລັດ**

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຂັ້ນແຂວງ ສາມາດມີເວັບໄຊ, ໂປຣແກຣມ ຫຼື ຊ່ອງທາງອື່ນ ໃນການໃຫ້ບໍລິການ ຫຼື ສະໜອງຂໍ້ມູນຂ່າວສານຂອງຕົນ ໃຫ້ແກ່ອົງການຈັດຕັ້ງລັດ ດ້ວຍກັນ, ຫົວໜ່ວຍທຸລະກິດ ແລະ ສັງຄົມ ຕາມຄວາມເໝາະສົມ.

ເວັບໄຊ ແລະ ອີເມວ ຂອງອົງການຈັດຕັ້ງລັດ ຕ້ອງນຳໃຊ້ລະຫັດຊື່ອິນເຕີເນັດ ແຫ່ງຊາດຂອງ ສປປ ລາວ ແລະ ເກັບຮັກສາໄວ້ໃນສູນຂອງຕົນ. ຖ້າຫາກບໍ່ມີສູນເປັນຂອງຕົນເອງ ກໍໃຫ້ເກັບຮັກສາໄວ້ໃນສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ແຫ່ງຊາດ.

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຂັ້ນແຂວງ ທີ່ເຜີຍແຜ່ຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ຕ້ອງຮັບຜິດຊອບຕໍ່ ເນື້ອໃນຂໍ້ມູນຂ່າວສານທີ່ຕົນເຜີຍແຜ່.

**ມາດຕາ 17 ເງື່ອນໄຂການເຜີຍແຜ່ ຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງອົງການຈັດຕັ້ງລັດ**

ການເຜີຍແຜ່ ຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງອົງການຈັດຕັ້ງລັດ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຮັບປະກັນການເຂົ້າເຖິງຂໍ້ມູນຂ່າວສານໄດ້ຢ່າງສະດວກ, ຖືກຕ້ອງ ແລະ ປອດໄພ;
2. ປັບປຸງຂໍ້ມູນຂ່າວສານຢ່າງເປັນປະຈຳ ແລະ ທັນການ;
3. ມີເຄື່ອງມືຄົ້ນຫາຂໍ້ມູນຂ່າວສານ ທີ່ສະດວກໃນການນຳໃຊ້ ແລະ ໃຊ້ໄດ້ຕົວຈິງ;
4. ຮັບປະກັນການໃຫ້ບໍລິການໄດ້ທຸກເວລາ, ໃນກໍລະນີ ບໍ່ສາມາດໃຫ້ການບໍລິການ ຕ້ອງແຈ້ງຜ່ານທາງເວັບໄຊ ຫຼື ສຳນັກງານຂອງຕົນ ຢ່າງໜ້ອຍ ເຈັດວັນ ລັດຖະການ ຍົກເວັ້ນເຫດສຸດວິໄສ.

**ມາດຕາ 18 ເນື້ອໃນການເຜີຍແຜ່ ຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງອົງການຈັດຕັ້ງລັດ**

ເນື້ອໃນຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງອົງການຈັດຕັ້ງລັດ ທີ່ນຳມາເຜີຍແຜ່ມີ ດັ່ງນີ້:

1. ໂຄງຮ່າງການຈັດຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການທີ່ກ່ຽວຂ້ອງ ແລະ ຂອງພາກສ່ວນທີ່ຂຶ້ນກັບ;
2. ແຜນຍຸດທະສາດ, ແຜນພັດທະນາ ແລະ ນິຕິກຳ ທີ່ກ່ຽວຂ້ອງ;
3. ຂັ້ນຕອນການຂໍ ແລະ ການໃຫ້ອະນຸຍາດ;
4. ຂ່າວສານ ກ່ຽວກັບການເຄື່ອນໄຫວຂອງຂະແໜງການຕົນ ຫຼື ຂອງພາກສ່ວນອື່ນທີ່ກ່ຽວຂ້ອງ;
5. ທີ່ຕັ້ງສຳນັກງານ, ຊ່ອງທາງການຕິດຕໍ່, ການສົ່ງຂ່າວ ແລະ ສະແດງຄຳຄິດເຫັນຈາກ ຫົວໜ່ວຍ ທຸລະກິດ ແລະ ສັງຄົມ.

**ມາດຕາ 19 ການໃຫ້ບໍລິການຜ່ານອິນເຕີເນັດຂອງອົງການຈັດຕັ້ງລັດ**

ການໃຫ້ບໍລິການຜ່ານອິນເຕີເນັດຂອງອົງການຈັດຕັ້ງລັດ ແມ່ນການໃຫ້ບໍລິການຂອງອົງການຈັດຕັ້ງລັດ ທີ່ມີສິດອຳນາດ ກ່ຽວກັບການອະນຸຍາດ, ການຢັ້ງຢືນ ຫຼື ການສະໜອງຂໍ້ມູນຕ່າງໆທີ່ມີຄຸນຄ່າທາງດ້ານກົດໝາຍ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດໂດຍຜ່ານອິນເຕີເນັດ.

**ມາດຕາ 20 ລະດັບການໃຫ້ບໍລິການຜ່ານອິນເຕີເນັດຂອງອົງການຈັດຕັ້ງລັດ**

ການບໍລິການຜ່ານອິນເຕີເນັດຂອງອົງການຈັດຕັ້ງລັດ ມີຫ້າ ລະດັບ ດັ່ງນີ້:

1. ລະດັບ 1 ແມ່ນການສະໜອງຢ່າງຄົບຖ້ວນຂໍ້ມູນຂ່າວສານ, ນິຕິກຳ, ຂັ້ນຕອນຕ່າງໆໃນການໃຫ້ບໍລິການຂອງອົງການຈັດຕັ້ງລັດທີ່ກ່ຽວຂ້ອງ;

2. ລະດັບ 2 ແມ່ນການໃຫ້ບໍລິການລະດັບ 1 ພ້ອມທັງ ໃຫ້ດາວໂຫຼດແບບພິມ ຄຳຮ້ອງ ແລະ ເອກະສານອື່ນ ເພື່ອນຳໄປປະກອບເອກະສານຄົບຖ້ວນ ແລ້ວຍື່ນຕໍ່ ອົງການຈັດຕັ້ງລັດດ້ວຍຕົນເອງ ຫຼື ຜ່ານໄປສະນີ;

3. ລະດັບ 3 ແມ່ນການໃຫ້ບໍລິການລະດັບ 2 ແລະ ສາມາດຍື່ນຕໍ່ ອົງການຈັດຕັ້ງລັດຜ່ານອິນເຕີເນັດ;

4. ລະດັບ 4 ແມ່ນການໃຫ້ບໍລິການລະດັບ 3 ພ້ອມທັງ ສາມາດຊຳລະຄ່າທຳນຽມ ແລະ ຄ່າບໍລິການຜ່ານອິນເຕີເນັດ;

5. ລະດັບ 5 ແມ່ນການໃຫ້ບໍລິການລະດັບ 4 ພ້ອມທັງ ສາມາດຮັບຜົນຂອງການອະນຸມັດຜ່ານອິນເຕີເນັດ.

**ມາດຕາ 21 ການຫັນຂໍ້ມູນຂ່າວສານເປັນຮູບແບບເອເລັກໂຕຣນິກຂອງອົງການຈັດຕັ້ງລັດ**

ຂໍ້ມູນຂ່າວສານຕ່າງໆຂອງອົງການຈັດຕັ້ງລັດ ຕ້ອງຖືກສ້າງ ແລະ ເກັບຮັກສາໃນຮູບແບບເອເລັກໂຕຣນິກ ໂດຍສອດຄ່ອງ ຕາມລະບຽບການ ກ່ຽວກັບມາດຕະຖານ ແລະ ເຕັກນິກ ເພື່ອຮັບປະກັນການເຂົ້າເຖິງ ຫຼື ຊອກຫາໄດ້ຢ່າງສະດວກ ແລະ ປອດໄພ.

ອົງການຈັດຕັ້ງລັດ ຕ້ອງສຳເນົາ ແລະ ເກັບຮັກສາຂໍ້ມູນຂ່າວສານຮູບແບບເອເລັກໂຕຣນິກ ໄວ້ໃນຖານຂໍ້ມູນ ໂດຍສອດຄ່ອງກັບ ມາດຕາ 15 ຂອງດຳລັດສະບັບນີ້, ພ້ອມກັນນັ້ນ ຕ້ອງປະຕິບັດຕາມລະບຽບການ ກ່ຽວກັບການສຳເນົາ ແລະ ເກັບຮັກສາເອກະສານທາງການ.

ອົງການຈັດຕັ້ງລັດ ຕ້ອງສົ່ງເສີມການນຳເອົາຂໍ້ມູນຂ່າວສານ ທີ່ຍັງບໍ່ເປັນຮູບແບບເອເລັກໂຕຣນິກ ໃຫ້ມາເປັນຮູບແບບເອເລັກໂຕຣນິກ ໂດຍອີງຕາມລຳດັບຄວາມສຳຄັນ.

ຮູບແບບຂອງເອກະສານເອເລັກໂຕຣນິກ ທີ່ຖືກສ້າງຂຶ້ນ ແລະ ເກັບຮັກສາ ຕ້ອງປະຕິບັດຕາມລະບຽບການກ່ຽວຂ້ອງ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

ເອກະສານເອເລັກໂຕຣນິກ ທີ່ເປັນພາສາລາວ ທີ່ຖືກສ້າງຂຶ້ນ ຕ້ອງນຳໃຊ້ຮູບແບບອັກສອນລາວໃນຄອມພິວເຕີ ທີ່ປະກາດນຳໃຊ້ໃນແຕ່ໄລຍະ.

## ໝວດທີ 2
## ຖານຂໍ້ມູນ ແລະ ຂໍ້ມູນຂ່າວສານຂອງພາກເອກະຊົນ

**ມາດຕາ 22 ຖານຂໍ້ມູນ ແລະ ຂໍ້ມູນຂ່າວສານຂອງພາກເອກະຊົນ**

ຖານຂໍ້ມູນ ແລະ ຂໍ້ມູນຂ່າວສານຂອງພາກເອກະຊົນ ທີ່ຖືກສ້າງຂຶ້ນເພື່ອໃຫ້ບໍລິການຢູ່ ສປປ ລາວ ຕ້ອງເກັບຮັກສາໄວ້ໃນສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຢູ່ພາຍໃນປະເທດ ໂດຍຮັບປະກັນຄວາມປອດໄພ ແລະ ຄວາມສະດວກ.

**ມາດຕາ 23 ການເຜີຍແຜ່ຂໍ້ມູນຂ່າວສານຂອງພາກເອກະຊົນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດສ້າງເວັບໄຊ, ຄຸ້ມຄອງເນື້ອໃນ ແລະ ບໍລິຫານຈັດການເວັບໄຊ ເພື່ອເປັນຊ່ອງທາງເຜີຍແຜ່ຂໍ້ມູນຂ່າວສານ ແລະ ການບໍລິການຂອງຕົນໄດ້ ແຕ່ຕ້ອງຮັບປະກັນຄວາມຖືກຕ້ອງຂອງຂໍ້ມູນຂ່າວສານ, ຄວາມປອດໄພ ແລະ ສາມາດເຂົ້າເຖິງໄດ້ຢ່າງສະດວກວ່ອງໄວ.

ເວັບໄຊຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຢູ່ໃນ ສປປ ລາວ ຕ້ອງນຳໃຊ້ລະຫັດຊື່ອິນເຕີເນັດແຫ່ງຊາດຂອງ ສປປ ລາວ, ໃນກໍລະນີຈຳເປັນ ຕ້ອງໃຊ້ລະຫັດຊື່ອິນເຕີເນັດອື່ນ ຕ້ອງສະເໜີລົງທະບຽນຢູ່ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເຜີຍແຜ່ຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ຕ້ອງຮັບຜິດຊອບຕໍ່ ເນື້ອໃນຂໍ້ມູນຂ່າວສານທີ່ຕົນເຜີຍແຜ່.

## ພາກທີ IV
## ມາດຕະຖານ ແລະ ຄວາມປອດໄພ
### ໝວດທີ 1
### ມາດຕະຖານທາງດ້ານເຕັກນິກ ແລະ ຄວາມປອດໄພ

**ມາດຕາ 24 ມາດຕະຖານທາງດ້ານເຕັກນິກ**

ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງມີມາດຕະຖານທາງດ້ານເຕັກນິກ ດັ່ງນີ້:

1. ມີອາຄານໄດ້ຕາມມາດຕະຖານທີ່ສາກົນຮັບຮອງ;
2. ມີລະບົບໄຟຟ້າຫຼັກ-ສຳຮອງ, ລະບົບຄວາມເຢັນ-ຄວາມຊຸ່ມ, ລະບົບລະບາຍອາກາດ, ລະບົບສາຍໄຟຟ້າ-ສາຍຂໍ້ມູນ ແລະ ອື່ນໆ ທີ່ຖືກຕ້ອງຕາມມາດຕະຖານທີ່ສາກົນຮັບຮອງ;
3. ນຳໃຊ້ອຸປະກອນ ທີ່ຖືກຕ້ອງຕາມມາດຕະຖານເຕັກນິກ ທີ່ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດໄວ້.
4. ຮັບປະກັນການເຊື່ອມຕໍ່ກັບກັບ ເຄືອຂ່າຍຜູ້ໃຫ້ບໍລິການອື່ນ ໂດຍຜ່ານສູນກາງເຊື່ອມຕໍ່ອິນເຕີເນັດທີ່ຂຶ້ນກັບ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
5. ມີລະບົບຮັກສາຂໍ້ມູນສຳຮອງ ທີ່ສາມາດເຮັດວຽກແທນລະບົບຫຼັກໄດ້ ໃນເວລາເກີດມີບັນຫາຂັດຂ້ອງ.

**ມາດຕາ 25 ມາດຕະຖານທາງດ້ານຄວາມປອດໄພ**

ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງປະຕິບັດມາດຕະຖານທາງດ້ານຄວາມປອດໄພ ດັ່ງນີ້:

1. ມີລະບົບຄວາມປອດໄພໃນລະບົບຕິດຕາມການເຮັດວຽກເຂົ້າ-ອອກ ແລະ ລະບົບກ້ອງວົງຈອນປິດ;
2. ມີລະບົບເຕືອນໄພ ແລະ ລະບົບປ້ອງກັນໄຟໄໝ້;
3. ມີລະບົບປ້ອງກັນການໂຈມຕີ (Firewall, Anti-DDOS ແລະ ອື່ນໆ) ທັງຈາກພາຍໃນ ແລະ ພາຍນອກ ເພື່ອຮັບປະກັນຂໍ້ມູນຂ່າວສານຂອງຜູ້ໃຊ້ບໍລິການ;

4. ມີລະບົບກັ່ນຕອງຂໍ້ມູນເຂົ້າ-ອອກ (Filtering) ເພື່ອປ້ອງກັນການນໍາໃຊ້ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ເປັນບ່ອນກະທໍາຄວາມຜິດ ຫຼື ໂຈມຕີຜູ້ອື່ນ.

## ໝວດທີ 2
## ມາດຕະການຄວາມປອດໄພ

### ມາດຕາ 26 ມາດຕະການຄວາມປອດໄພ

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງຈັດຕັ້ງປະຕິບັດທຸກມາດຕະການ ເພື່ອຮັບປະກັນຄວາມປອດໄພ ດັ່ງນີ້:

1. ມີພະນັກງານຮັບຜິດຊອບໃນການຄຸ້ມຄອງຄວາມປອດໄພ, ແນະນໍາ ແລະ ກວດກາການນໍາໃຊ້ ແລະ ແກ້ໄຂບັນຫາ;
2. ມີລະບົບເຕັກນິກທີ່ໄດ້ຮັບການປັບປຸງ, ຍົກລະດັບເປັນແຕ່ລະໄລຍະ ໃຫ້ທັນກັບການປ່ຽນແປງ;
3. ມີລະບຽບການສະເພາະ ເພື່ອໃຫ້ເປັນເອກະພາບ ແລະ ເຂັ້ມງວດໃນການຈັດຕັ້ງປະຕິບັດທັງ ພາຍໃນ ແລະ ພາຍນອກທີ່ເຂົ້າມາ.

### ມາດຕາ 27 ການຮັບປະກັນຄວາມປອດໄພຂອງຂໍ້ມູນຂ່າວສານ

ການຄຸ້ມຄອງຂໍ້ມູນຂ່າວສານຜູ້ໃຊ້ບໍລິການ ແລະ ຂໍ້ມູນຂ່າວສານສ່ວນບຸກຄົນ ທີ່ຖືກເກັບຮັກສາໄວ້ໃນ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງຮັບປະກັນບໍ່ໃຫ້ຖືກລັກ, ປ່ຽນແປງ, ທໍາລາຍ ຫຼື ລຶບລ້າງ ໂດຍໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານສ່ວນບຸກຄົນ, ການຕ້ານ ແລະ ສະກັດກັ້ນອາຊະຍາກໍາທາງລະບົບຄອມພິວເຕີ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ຂໍ້ມູນຂ່າວສານເອເລັກໂຕຣນິກ ທີ່ເປັນຄວາມລັບທາງລັດຖະການ ຈະຕ້ອງມີການແຍກປະເພດ, ການເກັບຮັກສາ ແລະ ການປົກປ້ອງສະເພາະ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຂໍ້ມູນຂ່າວສານເອເລັກໂຕຣນິກ ຕ້ອງສໍາເນົາໄວ້ ໂດຍມີການເກັບຮັກສາດ້ວຍຄວາມປອດໄພລະດັບດຽວກັນກັບ ຂໍ້ມູນຂ່າວສານເອເລັກໂຕຣນິກຫຼັກ.

ການເຂົ້າເຖິງຖານຂໍ້ມູນ ແລະ ຂໍ້ມູນຂ່າວສານ ຕ້ອງໄດ້ນໍາໃຊ້ລະຫັດລັບທີ່ມີຄວາມຊັບຊ້ອນພຽງພໍ ແລະ ມີການປ່ຽນໃໝ່ປະຈໍາ ເພື່ອຮັບປະກັນຄວາມປອດໄພ.

### ມາດຕາ 28 ການສະກັດກັ້ນ ແລະ ແກ້ໄຂບັນຫາຄວາມປອດໄພ ຂອງສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການເຝົ້າລະວັງ, ຕິດຕາມ, ກວດກາ, ແຈ້ງເຕືອນ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນກັບ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ຂໍ້ມູນຂ່າວສານເອເລັກໂຕຣນິກ ທັງພາກລັດ ແລະ ເອກະຊົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ການຮ່ວມມື ແລະ ອໍານວຍຄວາມສະດວກໃນການສະກັດກັ້ນ ແລະ ແກ້ໄຂບັນຫາຄວາມປອດໄພ ຂອງສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ຂໍ້ມູນຂ່າວສານເອເລັກໂຕຣນິກ.

## ພາກທີ V

## ການປະກອບ ແລະ ການພັດທະນາບຸກຄະລາກອນ

**ມາດຕາ 29 ການປະກອບບຸກຄະລາກອນ**

ສູນຂໍ້ມູນຂ່າວສານ ທັງພາກລັດ ແລະ ເອກະຊົນ ຕ້ອງປະກອບມີບຸກຄະລາກອນທີ່ມີ ຄວາມຮູ້ຄວາມສາມາດທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ຕາມຄວາມເໝາະສົມຂອງໜ້າວຽກ ກ່ຽວກັບສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ, ຖານຂໍ້ມູນ ແລະ ວຽກງານເຕັກໂນໂລຊີຂໍ້ມູນຂ່າວສານອື່ນ ໃນຂອບເຂດຄວາມຮັບຜິດຊອບຂອງຂະແໜງການ.

**ມາດຕາ 30 ການພັດທະນາບຸກຄະລາກອນ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ລວມທັງ ການຈັດຕັ້ງຂອງລັດ ແລະ ຂອງພັກ ຕ້ອງມີນະໂຍບາຍໃນການພັດທະນາ ແລະ ຍົກລະດັບຄວາມຮູ້ຄວາມສາມາດ ດ້ານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ, ຖານຂໍ້ມູນ ແລະ ເຕັກໂນໂລຊີສື່ສານຂໍ້ມູນຂ່າວສານອື່ນ ໃຫ້ແກ່ພະນັກງານທີ່ຮັບຜິດຊອບວຽກງານດັ່ງກ່າວ. ລັດ ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ບຸກຄະລາກອນ ທີ່ຮັບຜິດຊອບວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ຜູ້ອື່ນທີ່ສົນໃຈໄດ້ເຂົ້າຮ່ວມຍົກລະດັບຄວາມຮູ້ຄວາມສາມາດ ກ່ຽວກັບສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ, ຖານຂໍ້ມູນ ແລະ ເຕັກໂນໂລຊີສື່ສານຂໍ້ມູນຂ່າວສານອື່ນ ຢູ່ທັງພາຍໃນ ແລະ ຕ່າງປະເທດ.

## ພາກທີ VI

## ການສ້າງແຜນການ, ການລົງທຶນ ແລະ ການປະເມີນການນໍາໃຊ້

**ມາດຕາ 31 ການສ້າງແຜນການພັດທະນາ ແລະ ນໍາໃຊ້ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ສ້າງແຜນພັດທະນາ ແລະ ນໍາໃຊ້ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ທັງໄລຍະສັ້ນ ແລະ ໄລຍະຍາວຂອງຂະແໜງການຕົນ.

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ປະສານສົມທົບກັບ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການສ້າງແຜນພັດທະນາ ແລະ ນໍາໃຊ້ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ເພື່ອສະເໜີ ລັດຖະບານ ພິຈາລະນາ.

**ມາດຕາ 32 ການລົງທຶນໃສ່ວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ໃນການລົງທຶນໃສ່ວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງສຸມໃສ່ວຽກງານ ດັ່ງນີ້:

1. ການສ້າງ, ບໍາລຸງຮັກສາ ແລະ ປັບປຸງຍົກລະດັບໂຄງລ່າງພື້ນຖານທາງດ້ານເຕັກນິກ;
2. ການສ້າງ, ຈັດຊື້, ບໍາລຸງຮັກສາ ແລະ ປັບປຸງຍົກລະດັບຊອບແວ;
3. ການສ້າງ, ບໍາລຸງຮັກສາ ແລະ ປັບປຸງຍົກລະດັບຖານຂໍ້ມູນ ແລະ ລະບົບຄຸ້ມຄອງຂໍ້ມູນຂ່າວສານ;

4. ການສ້າງ, ບຳລຸງຮັກສາ ແລະ ປັບປຸງຍົກລະດັບລະບົບເຕັກນິກ ແລະ ລະບົບຈັດການອື່ນ ເພື່ອຮັບປະກັນຄວາມປອດໄພຂໍ້ມູນຂ່າວສານ;

5. ການສ້າງ ແລະ ບຳລຸງຮັກສາ ເວັບໄຊ;

6. ການສ້າງ ແລະ ເຜີຍແຜ່ລະບຽບການ ແລະ ຫຼັກການ ໃນການຄຸ້ມຄອງ ແລະ ນຳໃຊ້;

7. ການສ້າງ ແລະ ຝຶກອົບຮົມໃຫ້ແກ່ພະນັກງານວິຊາການ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ຕ້ອງປະສານສົມທົບກັບ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການລົງທຶນ ແລະ ຈັດຊື້ເຄື່ອງອຸປະກອນ, ຊອບແວ ແລະ ໂປຣແກຣມ ເພື່ອຮັບປະກັນຄຸນນະພາບ, ສາມາດເຊື່ອມໂຍງ ແລະ ປະຫຍັດ.

**ມາດຕາ 33 ລິຂະສິດໃນການສ້າງ ແລະ ພັດທະນາ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ລິຂະສິດໃນການສ້າງ ແລະ ພັດທະນາຊອບແວ, ລະບົບເຮັດວຽກ ແລະ ຖານຂໍ້ມູນໃນສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຫຼື ການນຳໃຊ້ເຕັກໂນໂລຊີສື່ສານຂໍ້ມູນຂ່າວສານ ເຂົ້າໃນລະບົບບໍລິຫານຂອງອົງການລັດ ຈະຕ້ອງປະຕິບັດຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ຕ້ອງກຳນົດໄວ້ໃນສັນຍາວ່າຈ້າງ ຢ່າງຊັດເຈນ.

**ມາດຕາ 34 ການປະເມີນລະດັບການນຳໃຊ້ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ອົງການຈັດຕັ້ງລັດ ຕ້ອງມີການປະເມີນການນຳໃຊ້ ແລະ ການໃຫ້ບໍລິການ ຂອງສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ຂໍ້ມູນຂ່າວສານເອເລັກໂຕຣນິກຂອງອົງການຈັດຕັ້ງຕົນ ເພື່ອໃຫ້ສອດຄ່ອງກັບລະບຽບການລົງທຶນຂອງລັດ ແລະ ແຜນພັດທະນາການນຳໃຊ້ເຕັກໂນໂລຊີສື່ສານຂໍ້ມູນຂ່າວສານຂອງ ລັດຖະບານ ໃນແຕ່ລະໄລຍະ;

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການແນະນຳບັນດາອົງການຈັດຕັ້ງລັດ ເພື່ອເຮັດການປະເມີນລະດັບການນຳໃຊ້ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ຂໍ້ມູນຂ່າວສານເອເລັກໂຕຣນິກ ແລະ ການນຳໃຊ້ເຕັກໂນໂລຊີສື່ສານຂໍ້ມູນຂ່າວສານ.

## ພາກທີ VII
## ການດຳເນີນກິດຈະການ
## ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກເອກະຊົນ
### ໝວດທີ 1
### ໃບອະນຸຍາດ

**ມາດຕາ 35 ໃບອະນຸຍາດດຳເນີນກິດຈະການ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກເອກະຊົນ**

ໃບອະນຸຍາດດຳເນີນກິດຈະການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກເອກະຊົນ ມີ ສອງ ປະເພດ ດັ່ງນີ້:

1. ໃບອະນຸຍາດສູນຂໍ້ມູນຜ່ານອິນເຕີເນັດ;

2. ໃບອະນຸຍາດສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ.

ແຕ່ລະປະເພດໃບອະນຸຍາດ ປະກອບມີ ໃບອະນຸຍາດຊົ່ວຄາວ ແລະ ໃບອະນຸຍາດສົມບູນ.

**ມາດຕາ 36 ອາຍຸການຂອງໃບອະນຸຍາດ**

ໃບອະນຸຍາດດຳເນີນກິດຈະການສູນຂໍ້ມູນຜ່ານອິນເຕີເນັດ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີອາຍຸການ ດັ່ງນີ້:

1. ໃບອະນຸຍາດຊົ່ວຄາວ ມີອາຍຸການ ໜຶ່ງ ປີ ແລະ ສາມາດຕໍ່ໄດ້ອີກບໍ່ເກີນ ໜຶ່ງ ປີ;
2. ໃບອະນຸຍາດສົມບູນ ມີອາຍຸການສູງສຸດບໍ່ເກີນ ຫ້າ ປີ ແລະ ສາມາດຕໍ່ໄດ້.

## ໝວດທີ 2
## ການຂໍອະນຸຍາດດຳເນີນກິດຈະການ

**ມາດຕາ 37 ການຂໍອະນຸຍາດດຳເນີນກິດຈະການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການດຳເນີນກິດຈະການ ສູນຂໍ້ມູນຜ່ານອິນເຕີເນັດ ຫຼື ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງຂໍອະນຸຍາດນຳ ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 38 ເງື່ອນໄຂການຂໍອະນຸຍາດດຳເນີນກິດຈະການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ເງື່ອນໄຂການຂໍອະນຸຍາດດຳເນີນກິດຈະການ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດມີ ດັ່ງນີ້:

1. ມີຖານະເປັນນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສ້າງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ;
2. ໃນກໍລະນີມີການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ຕ້ອງມີໃບອະນຸຍາດຈາກຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
3. ຕັ້ງຢູ່ໃນສະຖານທີ່ເໝາະສົມ, ບໍ່ແອອັດ, ຮັບປະກັນລັດຕັບເພີງເຂົ້າອອກໄດ້ງ່າຍ;
4. ເງື່ອນໄຂອື່ນຕາມການກຳນົດຂອງຂະແໜງການໄປສະນີ,ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 39 ການຍື່ນຄຳຮ້ອງ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນກິດຈະການ ສູນຂໍ້ມູນຜ່ານອິນເຕີເນັດ ຫຼື ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງປະກອບເອກະສານ ດັ່ງນີ້:

1. ສຳເນົາໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນການສ້າງຕັ້ງ;
2. ບົດວິພາກເສດຖະກິດ ແລະ ບົດວິພາກເຕັກນິກ;
3. ແຜນດຳເນີນກິດຈະການ ປີທຳອິດ;
4. ເອກະສານອື່ນຕາມການກຳນົດ ຂອງຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 40 ການພິຈາລະນາການຂໍອະນຸຍາດ**

ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈະພິຈາລະນາການຂໍອະນຸຍາດດຳເນີນກິດຈະການ ສູນຂໍ້ມູນຜ່ານອິນເຕີເນັດ ຫຼື ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ໂດຍການອອກໃບອະນຸຍາດ

ຊົ່ວຄາວ ໃຫ້ແກ່ຜູ້ຂໍອະນຸຍາດກ່ອນ ແລະ ຖ້າຜູ້ໄດ້ຮັບອະນຸຍາດ ຫາກສາມາດປະຕິບັດໄດ້ຢ່າງໜ້ອຍ ຫົກສິບສ່ວນຮ້ອຍ ຕາມແຜນດຳເນີນກິດຈະການປີທຳອິດ ກໍຈະອອກໃບອະນຸຍາດສົມບູນໃຫ້.

ກະຊວງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຕ້ອງພິຈາລະນາອອກໃບອະນຸຍາດ ແຕ່ລະປະເພດພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ.

ລາຍລະອຽດ ກ່ຽວກັບຂັ້ນຕອນການອອກໃບອະນຸຍາດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 41 ການໂຈະ ແລະ ຖອນໃບອະນຸຍາດ

ໃບອະນຸຍາດ ອາດຖືກໂຈະ ໂດຍກະຊວງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍລິການບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນໃບອະນຸຍາດ;
2. ປອມແປງ ຫຼື ສະໜອງຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ;
3. ບໍ່ຊຳລະຄ່ານຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ;
4. ບໍ່ຕໍ່ອາຍຸໃບອະນຸຍາດ;
5. ເກັບຄ່າບໍລິການບໍ່ຖືກຕ້ອງ ຕາມລະບຽບການທີ່ກຳນົດໄວ້;
6. ບໍ່ຊຳລະຄ່າທຳນຽມ, ຄ່າບໍລິການ ຫຼື ອາກອນໃຫ້ລັດ ຕາມກົດໝາຍ ແລະ ລະບຽບການ.

ໃບອະນຸຍາດ ຈະຖືກຖອນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ປັບປຸງ, ແກ້ໄຂຕາມເງື່ອນໄຂທີ່ ກະຊວງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດພາຍຫຼັງຖືກໂຈະ;
2. ນຳໃບອະນຸຍາດໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນໂດຍບໍ່ໄດ້ຮັບອະນຸຍາດ;
3. ບໍ່ດຳເນີນການພາຍໃນ ໜຶ່ງປີ ພາຍຫຼັງໄດ້ຮັບໃບອະນຸຍາດຊົ່ວຄາວແລ້ວ.

## ພາກທີ VIII
## ສິດ ແລະ ພັນທະຂອງຜູ້ໃຫ້ ແລະ ຜູ້ໃຊ້ບໍລິການ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ

### ມາດຕາ 42 ສິດ ແລະ ພັນທະຂອງຜູ້ໃຫ້ບໍລິການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ

ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໃຫ້ບໍລິການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີສິດ ແລະ ພັນທະ ດັ່ງນີ້:

1. ສະເໜີຂໍຕໍ່, ປ່ຽນແປງ, ໂຈະ ຫຼື ຍຸບເລີກການດຳເນີນກິດຈະການຂອງຕົນ;
2. ໂຈະການບໍລິການຕໍ່ຜູ້ໃຊ້ບໍລິການ ທີ່ລະເມີດສັນຍາ ຫຼື ມີພຶດຕິກຳທີ່ອາດສ້າງຄວາມເສຍຫາຍ ໃຫ້ແກ່ສູນ, ຄວາມສະຫງົບ ຫຼື ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

3. ປະຕິບັດຕາມລະບຽບການ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກ່ຽວກັບການເຊື່ອມຕໍ່ເຄືອຂ່າຍ ຢູ່ພາຍໃນ ແລະ ອອກສູ່ຕ່າງປະເທດ;

4. ເຄົາລົບສິດ ແລະ ເກັບຮັກສາຂໍ້ມູນຂ່າວສານສ່ວນຕົວຂອງຜູ້ໃຊ້ບໍລິການ ໂດຍມີລະບຽບການ ແລະ ລະບົບເຕັກນິກ ເພື່ອຮັກສາຂໍ້ມູນຂ່າວສານສ່ວນຕົວຂອງຜູ້ໃຊ້ບໍລິການ;

5. ບັນທຶກຂໍ້ມູນຂ່າວສານການນຳໃຊ້ ແລະ ລາຍງານຂໍ້ມູນຂ່າວສານເຕັກນິກຕໍ່ ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

6. ບໍ່ເປີດເຜີຍຂໍ້ມູນຂ່າວສານສ່ວນຕົວຂອງຜູ້ໃຊ້ບໍລິການ ຍົກເວັ້ນມີການສະເໜີຂອງອົງການຈັດຕັ້ງລັດທີ່ມີສິດອຳນາດກ່ຽວຂ້ອງ;

7. ໃຫ້ບໍລິການຕາມທີ່ໄດ້ສັນຍາ ຫຼື ໄດ້ແຈ້ງຕໍ່ຜູ້ໃຊ້ບໍລິການ;

8. ມີມາດຕະການໃນການແກ້ໄຂບັນຫາ ແລະ ຂໍ້ຂັດຂ້ອງທາງດ້ານເຕັກນິກໃຫ້ຜູ້ຊົມໃຊ້ ໂດຍແຈ້ງຜ່ານເວັບໄຊຂອງຕົນ ແລະ ກຳນົດໃນສັນຍາການໃຫ້ບໍລິການແກ່ຜູ້ຊົມໃຊ້ຢ່າງຊັດເຈນ;

9. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 43 ສິດ ແລະ ພັນທະຂອງຜູ້ໃຊ້ບໍລິການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ຜູ້ໃຊ້ບໍລິການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີສິດ ແລະ ພັນທະ ດັ່ງນີ້:

1. ໄດ້ຮັບການບໍລິການທີ່ມີຄຸນນະພາບ, ສະດວກ, ວ່ອງໄວ ແລະ ປອດໄພ;

2. ສະເໜີຕໍ່ອົງການຄຸ້ມຄອງ ແລະ ກວດກາ ກ່ຽວກັບຄຸນນະພາບການບໍລິການ, ມາດຕະຖານເຕັກນິກ ແລະ ຄ່າບໍລິການຕ່າງໆຂອງຜູ້ໃຫ້ບໍລິການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ;

3. ຮັບຜິດຊອບຕໍ່ຂໍ້ມູນຂ່າວສານຂອງຕົນ ທີ່ສ້າງຄວາມເສຍຫາຍແກ່ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ສັງຄົມ;

4. ຈ່າຍຄ່າບໍລິການຕາມສັນຍາການນຳໃຊ້;

5. ທວງຖາມ ແລະ ຮ້ອງຟ້ອງຜູ້ໃຫ້ບໍລິການ ໃນກໍລະນີສິດ ແລະ ຜົນປະໂຫຍດຂອງຕົນ ຖືກລະເມີດ;

6. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ IX
## ຂໍ້ຫ້າມ

**ມາດຕາ 44 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ກີດກັ້ນ, ຂັດຂວາງການໃຫ້ບໍລິການຂອງສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຫຼື ລະບົບເຕັກໂນໂລຊີສື່ສານຂໍ້ມູນຂ່າວສານຂອງພາກລັດ ຫຼື ເອກະຊົນ;

2. ນຳເອົາ, ເຂົ້າເຖິງ, ດັດແປງ, ທຳລາຍ ຫຼື ເຜີຍແຜ່ຂໍ້ມູນຂ່າວສານສ່ວນບຸກຄົນ ໂດຍບໍ່ໄດ້ຮັບອະນຸຍາດ;

3. ຮ່ວມມື, ສ້າງເງື່ອນໄຂ ຫຼື ອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ໃນການລະເມີດຂໍ້ຫ້າມ ທີ່ກຳນົດໄວ້ໃນດຳລັດສະບັບນີ້;

4. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 45 ຂໍ້ຫ້າມສຳລັບເຈົ້າໜ້າທີ່, ພະນັກງານ ຫຼື ການຈັດຕັ້ງພາກລັດ.**

ຫ້າມເຈົ້າໜ້າທີ່, ພະນັກງານຂອງລັດ ແລະ ການຈັດຕັ້ງລັດ ທີ່ຮັບຜິດຊອບສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີພຶດຕິກຳ ດັ່ງນີ້:

1. ເຂົ້າເຖິງຖານຂໍ້ມູນຂ່າວສານສ່ວນບຸກຄົນ ຫຼື ຖານຂໍ້ມູນທີ່ເກັບຮັກສາຂໍ້ມູນຂ່າວສານລັບທາງລັດຖະການ ໂດຍບໍ່ໄດ້ຮັບອະນຸຍາດ;

2. ດັດແປງ, ທຳລາຍ ຫຼື ເຜີຍແຜ່ຂໍ້ມູນຂ່າວສານສ່ວນບຸກຄົນ ຫຼື ຂໍ້ມູນຂ່າວສານລັບທາງລັດຖະການ ໂດຍບໍ່ໄດ້ຮັບ ອະນຸຍາດ;

3. ສ່ວຍໃຊ້ລະບົບການໃຫ້ບໍລິການ ແລະ ສະໜອງຂໍ້ມູນຂ່າວສານຂອງພາກລັດ ຜ່ານອິນເຕີເນັດ ທີ່ຂັດຕໍ່ແນວທາງຂອງພັກ-ລັດ;

4. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບທີ່ການຈັດຕັ້ງມອບໝາຍໃຫ້;

5. ນຳເອົາຖານຂໍ້ມູນ ແລະ ຂໍ້ມູນຂ່າວສານຂອງພາກລັດ ໄປເກັບຮັກສາໄວ້ຢູ່ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ທີ່ຕັ້ງຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ;

6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 46 ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກເອກະຊົນ**

ຫ້າມຜູ້ໃຫ້ບໍລິການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກເອກະຊົນ ມີພຶດຕິກຳ ດັ່ງນີ້:

1. ດຳເນີນກິດຈະການໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

2. ນຳໃບອະນຸຍາດໃຫ້ຜູ້ອື່ນນຳໃຊ້, ໃຫ້ເຊົ່າ ຫຼື ໂອນ;

3. ໃຫ້ບໍລິການນອກເໜືອຈາກ ປະເພດການໃຫ້ບໍລິການ ຕາມທີ່ກຳນົດໃນໃບອະນຸຍາດ ຫຼື ຂອບເຂດມາດຕະຖານເຕັກນິກທີ່ກຳນົດໄວ້;

4. ເຊື່ອມຕໍ່ເຄືອຂ່າຍໂດຍບໍ່ໄດ້ຮັບອະນຸຍາດ;

5. ໂຄສະນາໃສ່ຮ້າຍປ້າຍສີຜູ້ໃຫ້ບໍລິການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດລາຍອື່ນ;

6. ຜູກຂາດ ຫຼື ກີດກັນຜູ້ໃຫ້ບໍລິການອື່ນ;

7. ອຸດໜູນ, ຄອບງຳ ຫຼື ໃຊ້ອຳນາດການຕະຫຼາດ ທີ່ບໍ່ເປັນທຳຕໍ່ຜູ້ປະກອບການລາຍຍ່ອຍ;

8. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

# ພາກທີ X
# ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 47 ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ ໂດຍຄູ່ກໍລະນີ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານປະຊາຊົນ;
5. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ 48 ການປະນີປະນອມໂດຍຄູ່ກໍລະນີ**

ໃນກໍລະນີ ມີຂໍ້ຂັດແຍ່ງ ກ່ຽວກັບວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ທີ່ບໍ່ເປັນການກະທຳຜິດທາງອາຍາ ຄູ່ກໍລະນີ ສາມາດປຶກສາຫາລື ແລະ ປະນີປະນອມກັນ ໂດຍສັນຕິວິທີ ເພື່ອໃຫ້ຕ່າງຝ່າຍຕ່າງ ໄດ້ຮັບຜົນປະໂຫຍດ.

**ມາດຕາ 49 ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີ ມີຂໍ້ຂັດແຍ່ງ ກ່ຽວກັບວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ທີ່ມີລັກສະນະບໍລິຫານ ແລະ ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງອົງການຄຸ້ມຄອງ ວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຄູ່ກໍລະນີ ສາມາດສະເໜີຕໍ່ອົງການດັ່ງກ່າວ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 50 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີ ເກີດຂໍ້ຂັດແຍ່ງທາງດ້ານເສດຖະກິດ ເນື່ອງຈາກການດຳເນີນທຸລະກິດ ກ່ຽວກັບສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຄູ່ກໍລະນີ ມີສິດຮ້ອງຂໍໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 51 ການຮ້ອງຟ້ອງຕໍ່ສານປະຊາຊົນ**

ໃນກໍລະນີ ເກີດຂໍ້ຂັດແຍ່ງ ກ່ຽວກັບວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຄູ່ກໍລະນີ ມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ພິຈາລະນາຕັດສິນ ຕາມກົດໝາຍ.

**ມາດຕາ 52 ການແກ້ໄຂທີ່ມີລັກສະນະສາກົນ**

ໃນກໍລະນີ ມີຂໍ້ຂັດແຍ່ງ ກ່ຽວກັບວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ, ສັນຍາສາກົນ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

# ພາກທີ XI
# ການຄຸ້ມຄອງ ແລະ ການກວດກາ ວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ
## ໝວດທີ 1
## ການຄຸ້ມຄອງ

### ມາດຕາ 53 ອົງການຄຸ້ມຄອງວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ

ລັດ ເປັນຜູ້ຄຸ້ມຄອງວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ປະກອບດ້ວຍ:

1. ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
2. ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ.

### ມາດຕາ 54 ສິດ ແລະ ໜ້າທີ່ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ກະຊວງໄປສະນີ,ໂທລະຄົມມະນາຄົມ ແລະ ການສື່ສານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກໍາ ກ່ຽວກັບວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ເພື່ອສະເໜີ ລັດຖະບານ ພິຈາລະນາ;
2. ຈັດຕັ້ງ ແລະ ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກໍາ ກ່ຽວກັບວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ນິຕິກໍາ ແລະ ແຜນການ ກ່ຽວກັບວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຢ່າງກວ້າງຂວາງ;
4. ຄຸ້ມຄອງການສ້າງ ແລະ ນໍາໃຊ້ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດທົ່ວປະເທດ;
5. ເປັນຈຸດປະສານງານກັບ ບັນດາອົງການຈັດຕັ້ງລັດ ໃນການສ້າງ, ນໍາໃຊ້ ແລະ ພັດທະນາສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ;
6. ຄົ້ນຄວ້າ ອອກ, ຕໍ່, ໂຈະ, ປ່ຽນແປງ ແລະ ຖອນ ໃບອະນຸຍາດ ດໍາເນີນກິດຈະການ ກ່ຽວກັບ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ພາກເອກະຊົນ;
7. ຄົ້ນຄວ້າກໍານົດມາດຕະຖານ, ອອກຄໍາແນະນໍາ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ການໃຫ້ບໍລິການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ;
8. ປະເມີນ ແລະ ກວດກາການສ້າງ ແລະ ນໍາໃຊ້ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງພາກລັດ ແລະ ເອກະຊົນ;
9. ໃຫ້ຄໍາປຶກສາ ແລະ ແນະນໍາ ກ່ຽວກັບການສ້າງ ແລະ ນໍາໃຊ້ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ, ການຈັດຕັ້ງປະຕິບັດແຜນການສ້າງ ແລະ ພັດທະນາ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການນໍາໃຊ້ເຕັກໂນ

ໂລຊີສື່ສານຂໍ້ມູນຂ່າວສານຂອງອົງການຈັດຕັ້ງລັດ;

10. ໃຫ້ຄໍາປຶກສາ ແລະ ເປັນເຈົ້າການຈັດຕັ້ງປະຕິບັດ ວຽກງານປ້ອງກັນຄວາມປອດໄພຂໍ້ມູນຂ່າວສານທາງລະບົບຄອມພິວເຕີ;

11. ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ;

12. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດຕໍ່ ລັດຖະບານຢ່າງເປັນປົກກະຕິ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 55 ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ**

ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ ແລະ ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ນິຕິກໍາ ແລະ ແຜນການ ກ່ຽວກັບວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ;

2. ຄຸ້ມຄອງການສ້າງ ແລະ ນໍາໃຊ້ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ;

3. ເປັນຈຸດປະສານງານກັບບັນດາອົງການລັດ, ອົງການປົກຄອງທ້ອງຖິ່ນໃນການສ້າງ, ນໍາໃຊ້ ແລະ ພັດທະນາ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ;

4. ຄົ້ນຄ້ວາ ອອກ, ຕໍ່, ໂຈະ, ປ່ຽນແປງ ແລະ ຖອນ ໃບອະນຸຍາດດໍາເນີນທຸລະກິດ ກ່ຽວກັບສູນຂໍ້ມູນຂ່າວສານຜ່ານອິນເຕີເນັດພາກເອກະຊົນ ຕາມການມອບໝາຍຂອງຂັ້ນເທິງ ໂດຍປະສານກັບພາກສ່ວນທີ່ກ່ຽວຂ້ອງ;

5. ປະເມີນ ແລະ ກວດກາການສ້າງ ແລະ ນໍາໃຊ້ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງບັນດາອົງການຕ່າງໆ;

6. ໃຫ້ຄໍາປຶກສາ ແລະ ແນະນໍາ ກ່ຽວກັບການສ້າງ ແລະ ນໍາໃຊ້ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ, ການຈັດຕັ້ງປະຕິບັດແຜນການສ້າງ ແລະ ພັດທະນາສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການນໍາໃຊ້ເຕັກໂນໂລຊີສື່ສານຂໍ້ມູນຂ່າວສານຂອງອົງການຈັດຕັ້ງລັດ;

7. ປະສານສົມທົບກັບພະແນກການ, ຫ້ອງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ;

8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວ ວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດຕໍ່ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ອົງການປົກຄອງແຂວງ ຢ່າງເປັນປົກກະຕິ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການກວດກາ

### ມາດຕາ 56 ອົງການກວດກາວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ

ອົງການກວດກາວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບ ອົງການຄຸ້ມຄອງວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 53 ຂອງດຳລັດສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງມີ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ.

### ມາດຕາ 57 ເນື້ອໃນກວດກາ

ການກວດກາວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີເນື້ອໃນ ດັ່ງນີ້:

1. ປະຕິບັດແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວ ກ່ຽວກັບວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ;

3. ຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກຂອງພະນັກງານ ທີ່ປະຕິບັດວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ;

4. ການເຄື່ອນໄຫວຂອງຜູ້ໃຫ້ບໍລິການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ;

5. ການເຄື່ອນໄຫວຂອງຜູ້ໃຊ້ບໍລິການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ;

6. ການປະຕິບັດ ສັນຍາສາກົນ ແລະ ສົນທິສັນຍາ ກ່ຽວກັບວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດທີ່ ສປປ ລາວ ເປັນພາຄີ.

### ມາດຕາ 58 ຮູບແບບການກວດກາ

ການກວດກາວຽກງານສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີສາມ ຮູບການ ຄື:

1. ການກວດກາປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາປົກກະຕິ ແມ່ນການກວດກາ ຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດສອບນອກແຜນ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາ ໃຫ້ປະຕິບັດຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

## ພາກທີ XII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 59 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 60 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ລວມທັງໃຊ້ແທນຄ່າເສຍຫາຍທີ່ຕົນ ໄດ້ກໍ່ຂຶ້ນ.

**ມາດຕາ 61 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກຳນົດໃນດຳລັດສະບັບນີ້ ໃນສະຖານເບົາ ຈະຖືກຕັກເຕືອນ, ສຶກສາອົບຮົມ.

**ມາດຕາ 62 ມາດຕະການທາງວິໄນ**

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 63 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກປັບໃໝຕາມແຕ່ລະກໍລະນີ ດັ່ງນີ້:

1. ດຳເນີນກິດຈະການສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈະຖືກປັບໃໝ 50.000.000 ກີບ;
2. ເອົາໃບອະນຸຍາດໃຫ້ຜູ້ອື່ນ ນຳໃຊ້, ເຊົ່າ ຫຼື ໂອນ ຈະຖືກປັບໃໝ 20.000.000 ກີບ;
3. ບໍລິການບໍ່ຖືກຕ້ອງຕາມທີ່ໄດ້ບົ່ງໄວ້ໃນໃບອະນຸຍາດ ຈະຖືກປັບໃໝ 10.000.000 ກີບ;
4. ປັບປຸງ ແລະ ຂະຫຍາຍສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ຫຼື ເຊື່ອມຕໍ່ເຄືອຂ່າຍ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 20.000.000 ກີບ;

5. ບໍ່ສະໜອງຂໍ້ມູນ ກ່ຽວກັບການເຊື່ອມຕໍ່ເຄືອຂ່າຍໃຫ້ຄົບຖ້ວນ ແລະ ຖືກຕ້ອງຕໍ່ ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈະຖືກປັບໃໝ 10.000.000 ກີບ;

6. ບໍ່ບັນທຶກຂໍ້ມູນຂ່າວສານການນໍາໃຊ້ ແລະ ບໍ່ລາຍງານຂໍ້ມູນຂ່າວສານຕາມກົດໝາຍ, ລະບຽບການ ແລະ ການກໍານົດຂອງ ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈະຖືກປັບໃໝ 10.000.000 ກີບ;

7. ບໍ່ດໍາເນີນກິດຈະການພາຍໃນໜຶ່ງປີ ຫຼັງຈາກໄດ້ຮັບອະນຸຍາດ ຈະຖືກປັບໃໝ 20.000.000 ກີບ;

8. ເປີດເຜີຍຂໍ້ມູນຂ່າວສານສ່ວນບຸກຄົນຂອງຜູ້ໃຊ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງ ຈະຖືກປັບໃໝ 20.000.000 ກີບ;

9. ໃຫ້ບໍລິການບໍ່ຖືກຕ້ອງ ຕາມທີ່ໄດ້ສັນຍາ ຫຼື ແຈ້ງຕໍ່ຜູ້ຊົມໃຊ້ຜ່ານສື່ຕ່າງໆ ຈະຖືກປັບໃໝ 20.000.000 ກີບ.

**ມາດຕາ 64 ມາດຕະການທາງອາຍາ**

ບຸກຄົນ ທີ່ລະເມີດດໍາລັດສະບັບນີ້ ຊຶ່ງເປັນການກະທໍາຜິດທາງອາຍາ ຈະຖືກລົງໂທດ ຕາມກົດໝາຍອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ພາກທີ XIII
## ບົດບັນຍັດສຸດທ້າຍ

**ມາດຕາ 65 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນໃຈກາງປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການອື່ນ ທັງພາກລັດ ແລະ ເອກະຊົນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 66 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ລັດຖະບານແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ